ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0623 /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 05 ມິຖຸນາ 2019

# ຂໍ້ຕົກລົງ

# ວ່າດ້ວຍສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ

- ອີງຕາມດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017.
- ອີງຕາມດຳລັດ ວ່າດ້ວຍການນຳເຂົ້າ ແລະ ການສົ່ງອອກສິນຄ້າ, ສະບັບເລກທີ 114/ລບ, ລົງວັນທີ 06 ເມສາ 2011.
- ອີງຕາມການສະເໜີຂອງກົມການນຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 2349/ກຂອ.ສລ, ລົງວັນທີ 27 ພຶດສະພາ 2019.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ I

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການນຳເຂົ້າ ແລະ ສົ່ງອອກສິນຄ້າຂອງຜູ້ຄ້າຕ່າງປະເທດ ເພື່ອເປີດກວ້າງ ແລະ ສ້າງເງື່ອນໄຂເອື້ອອຳນວຍໃຫ້ແກ່ການນຳເຂົ້າ ແລະ ການສົ່ງອອກສິນຄ້າ ແນໃສ່ຊຸກຍູ້ສົ່ງເສີມການຄ້າ ແລະ ການຜະລິດພາຍໃນ ໃຫ້ມີຄວາມເຂັ້ມແຂງ ສາມາດເຊື່ອມໂຍງເສດຖະກິດພາກພື້ນ ແລະ ສາກົນ ປະກອບສ່ວນແກ່ການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 ສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ

ສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ ແມ່ນ ສິດໃນການນຳເຂົ້າ ແລະ ສົ່ງອອກສິນຄ້າ ຂອງຜູ້ຄ້າຕ່າງປະເທດ ທີ່ບໍ່ໄດ້ຂຶ້ນທະບຽນວິສາຫະກິດ ຢູ່ ສປປ ລາວ ຕາມເງື່ອນໄຂທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

**1. ຜູ້ຄ້າຕ່າງປະເທດ (Foreign Traders)** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ເຄື່ອນໄຫວທຸລະກິດຢູ່ຕ່າງປະເທດ ຊຶ່ງບໍ່ໄດ້ຂຶ້ນທະບຽນວິສາຫະກິດ ຢູ່ ສປປ ລາວ.

**2. ຜູ້ຄ້າພາຍໃນ (Domestic Traders)** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ລວມທັງຄົນລາວ ແລະ ຄົນຕ່າງປະເທດ ທີ່ເຄື່ອນໄຫວທຸລະກິດ ແລະ ມີສິດຈຳໜ່າຍສິນຄ້າ ຢູ່ ສປປ ລາວ.

**3. ໃບຢັ້ງຢືນສິດທາງການຄ້າ** ໝາຍເຖິງ ເອກະສານຢັ້ງຢືນສິດໃນການເຄື່ອນໄຫວທາງການຄ້າຂອງຜູ້ຄ້າຕ່າງປະເທດ.

### ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຜູ້ຄ້າຕ່າງປະເທດ ທີ່ໄດ້ຮັບການຢັ້ງຢືນສິດທາງການຄ້າ ຢູ່ ສປປ ລາວ.

## ໝວດທີ II
## ການອອກໃບຢັ້ງຢືນສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ

### ມາດຕາ 5 ການອອກໃບຢັ້ງຢືນສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ

ການອອກໃບຢັ້ງຢືນສິດທາງການຄ້າ ແມ່ນ ການໃຫ້ສິດແກ່ຜູ້ຄ້າຕ່າງປະເທດ ດຳເນີນການນຳເຂົ້າ ແລະ ສົ່ງອອກສິນຄ້າ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການກ່ຽວຂ້ອງ ຂອງ ສປປ ລາວ.

### ມາດຕາ 6 ເງື່ອນໄຂການອອກໃບຢັ້ງຢືນສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ

ການອອກໃບຢັ້ງຢືນສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ບຸກຄົນ ຫຼື ນິຕິບຸກຄົນ ທີ່ເຄື່ອນໄຫວທຸລະກິດ ໂດຍສອດຄ່ອງກັບກົດໝາຍຂອງປະເທດຜູ້ຄ້າຕ່າງປະເທດ;
2. ບໍ່ເຄີຍມີປະຫວັດການກະທຳຜິດ ຫຼື ບໍ່ຢູ່ໃນຂັ້ນຕອນການດຳເນີນຄະດີໃດໜຶ່ງ ທີ່ຕິດພັນກັບການຄ້າ ແລະ ການເງິນ;
3. ເປັນຜູ້ຄ້າຕ່າງປະເທດ ຈາກບັນດາປະເທດສະມາຊິກຂອງອົງການການຄ້າໂລກ.

### ມາດຕາ 7 ເອກະສານປະກອບສະເໜີຂໍໃບຢັ້ງຢືນສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ

ການຂໍໃບຢັ້ງຢືນສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ ຕ້ອງປະກອບເອກະສານ ດັ່ງນີ້:

1. ໜັງສະເໜີ ຕາມແບບພິມທີ່ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ກຳນົດໄວ້ (ແບບພິມ 1);
2. ສຳເນົາໜັງສືຜ່ານແດນ (Passport) ຫຼື ໃບທະບຽນວິສາຫະກິດ ຂອງຜູ້ຄ້າຕ່າງປະເທດຢູ່ປະເທດຂອງຜູ້ກ່ຽວ;
3. ເອກະສານຢັ້ງຢືນທີ່ຢູ່ ຫຼື ທີ່ຕັ້ງຂອງວິສາຫະກິດຢູ່ປະເທດຂອງຜູ້ຄ້າຕ່າງປະເທດ;
4. ໃບແຈ້ງໂທດ ຫຼື ເອກະສານຢັ້ງຢືນປະຫວັດທີ່ບໍ່ເຄີຍມີການກະທຳຜິດໃດໜຶ່ງ;
5. ໃບມອບສິດ ໃນກໍລະນີຜູ້ຄ້າຕ່າງປະເທດບໍ່ສາມາດຍື່ນເອກະສານໄດ້ດ້ວຍຕົນເອງ.

ເອກະສານປະກອບສະເໜີຂໍໃບຢັ້ງຢືນສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ ຕ້ອງໄດ້ປະກອບ ມີສະບັບ ພາສາລາວ ແລະ ພາສາອັງກິດ ໂດຍຜ່ານການຢັ້ງຢືນຈາກສະຖານທູດ, ຫ້ອງການຜູ້ຕາງໜ້າ ສປປ ລາວ ຢູ່ປະເທດຜູ້ຄ້າຕ່າງປະເທດ ຫຼື ສະຖານທູດ, ຫ້ອງການຜູ້ຕາງໜ້າຂອງປະເທດຜູ້ຄ້າຕ່າງປະເທດ ປະຈຳຢູ່ ສປປ ລາວ.

**ມາດຕາ 8 ຂັ້ນຕອນການສະເໜີຂໍໃບຢັ້ງຢືນສິດທາງການຄ້າ**

ຜູ້ຄ້າຕ່າງປະເທດທີ່ມີຈຸດປະສົງຂໍໃບຢັ້ງຢືນສິດທາງການຄ້າ ຕ້ອງປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ສະເໜີຕໍ່ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 9 ການພິຈາລະນາອອກໃບຢັ້ງຢືນສິດທາງການຄ້າ**

ພາຍຫຼັງທີ່ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້, ກົມການນຳເຂົ້າ ແລະ ສົ່ງອອກ ຕ້ອງກວດກາເນື້ອໃນເອກະສານ ແລະ ອອກໃບຢັ້ງຢືນສິດທາງການຄ້າໃຫ້ຜູ້ຄ້າຕ່າງປະເທດ ຢ່າງຊ້າບໍ່ໃຫ້ເກີນ ຊາວວັນ ລັດຖະການ ນັບແຕ່ມື້ຮັບເອກະສານເປັນຕົ້ນໄປ.

ໃນກໍລະນີບໍ່ສາມາດອອກໃບຢັ້ງຢືນສິດທາງການຄ້າໃຫ້ແກ່ຜູ້ຄ້າຕ່າງປະເທດ ຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນ ພາຍໃນ ສິບຫ້າວັນ ລັດຖະການ ນັບແຕ່ວັນຮັບເອກະສານເປັນຕົ້ນໄປ.

**ມາດຕາ 10 ການດັດແກ້ເນື້ອໃນ, ການຕໍ່ອາຍຸ ແລະ ການອອກໃບຢັ້ງຢືນສິດທາງການຄ້າຂອງຜູ້ຄ້າຕ່າງປະເທດຄືນໃໝ່**

ໃບຢັ້ງຢືນສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ ມີອາຍຸການນຳໃຊ້ ສາມປີ ແລະ ສາມາດຕໍ່ໄດ້.

ຜູ້ຄ້າຕ່າງປະເທດທີ່ໄດ້ຮັບໃບຢັ້ງຢືນສິດທາງການຄ້າ ຫາກຕ້ອງການດັດແກ້ເນື້ອໃນ, ຕໍ່ອາຍຸ ຫຼື ອອກໃບຢັ້ງຢືນສິດທາງດ້ານການຄ້າຄືນໃໝ່ ຕ້ອງຍື່ນໃບສະເໜີ ແລະ ເອກະສານປະກອບຕາມແບບພິມທີ່ກຳນົດໄວ້ (ແບບພິມ 2) ຕໍ່ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາອອກໃບຢັ້ງຢືນສິດທາງການຄ້າໃໝ່.

ສຳລັບອາຍຸການນຳໃຊ້ຂອງໃບຢັ້ງຢືນສິດທາງການຄ້າສະບັບໃໝ່ ແມ່ນ ໃຫ້ຖືເອົາຕາມອາຍຸທີ່ຍັງເຫຼືອໃນໃບຢັ້ງຢືນສິດທາງການຄ້າສະບັບເກົ່າ.

**ມາດຕາ 11 ການຍົກເລີກ ຫຼື ລຶບລ້າງໃບຢັ້ງຢືນສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ**

ໃບຢັ້ງຢືນສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ ຈະຖືກຍົກເລີກ ຫຼື ລຶບລ້າງ ໃນກໍລະນີດັ່ງນີ້:

1. ຜູ້ຄ້າຕ່າງປະເທດບໍ່ປະຕິບັດຕາມມາດຕາ 15 ຂອງຂໍ້ຕົກລົງສະບັບນີ້;
2. ຜູ້ຄ້າຕ່າງປະເທດ ສະເໜີຍົກເລີກ ຫລື ລຶບລ້າງໃບຢັ້ງຢືນຂອງຕົນເອງ ກ່ອນມື້ໝົດອາຍຸ;
3. ໃບຢັ້ງຢືນສິດທາງການຄ້າໝົດອາຍຸ ແລະ ບໍ່ໄດ້ຮັບການຕໍ່ອາຍຸ.

## ໝວດທີ III
## ການນຳເຂົ້າ ແລະ ສົ່ງອອກສິນຄ້າ ຂອງຜູ້ຄ້າຕ່າງປະເທດ

**ມາດຕາ 12 ເງື່ອນໄຂການນຳເຂົ້າ ແລະ ສົ່ງອອກສິນຄ້າຂອງຜູ້ຄ້າຕ່າງປະເທດ**

ການນຳເຂົ້າ ແລະ ສົ່ງອອກສິນຄ້າ ຂອງຜູ້ຄ້າຕ່າງປະເທດ ຕ້ອງມີເງື່ອນໄຂດັ່ງລຸ່ມນີ້:

1. ມີໃບຢັ້ງຢືນສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ;
2. ນຳເຂົ້າ ແລະ ສົ່ງອອກສິນຄ້າແຕ່ລະຄັ້ງ ຕ້ອງຜ່ານດ່ານພາສີສາກົນ;
3. ວາງເງິນຄ້ຳປະກັນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງພາສີ.

**ມາດຕາ 13 ຂັ້ນຕອນການນຳເຂົ້າ ແລະ ສົ່ງອອກສິນຄ້າຂອງຜູ້ຄ້າຕ່າງປະເທດ**

ການນຳເຂົ້າ ແລະ ສົ່ງອອກສິນຄ້າຂອງຜູ້ຄ້າຕ່າງປະເທດ ຕ້ອງປະຕິບັດຕາມຂັ້ນຕອນ ທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ດັ່ງນີ້:

1. ການນຳເຂົ້າ ຫຼື ສົ່ງອອກສິນຄ້າທົ່ວໄປ ແມ່ນ ສາມາດດຳເນີນຂະບວນການແຈ້ງພາສີຢູ່ດ່ານໄດ້ເລີຍ.

2. ການນຳເຂົ້າ ຫຼື ສົ່ງອອກສິນຄ້າຄຸ້ມຄອງ ຜູ້ຄ້າຕ່າງປະເທດຕ້ອງໄດ້ຂໍອະນຸຍາດຈາກຂະແໜງການກ່ຽວຂ້ອງກ່ອນດຳເນີນການແຈ້ງພາສີຢູ່ດ່ານ;

3. ການນຳເຂົ້າ ຫຼື ສົ່ງອອກສິນຄ້າ ທີ່ຮຽກຮ້ອງໃຫ້ມີການຢັ້ງຢືນ ດ້ານມາດຕະການສຸຂານາໄມ ແລະ ສຸຂານາໄມພືດ ຫຼື ລະບຽບການທາງດ້ານເຕັກນິກ ແມ່ນໃຫ້ພົວພັນນຳຂະແໜງການກ່ຽວຂ້ອງ;

## ໝວດທີ IV
## ສິດ ແລະ ພັນທະຂອງຜູ້ຄ້າຕ່າງປະເທດທີ່ໄດ້ຮັບການຢັ້ງຢືນສິດທາງການຄ້າ

### ມາດຕາ 14 ສິດຂອງຜູ້ຄ້າຕ່າງປະເທດທີ່ໄດ້ຮັບການຢັ້ງຢືນສິດທາງການຄ້າ

ຜູ້ຄ້າຕ່າງປະເທດທີ່ໄດ້ຮັບການຢັ້ງຢືນສິດທາງການຄ້າ ມີສິດດັ່ງນີ້:

1. ນຳເຂົ້າ ແລະ ສົ່ງອອກສິນຄ້າ ຕາມທີ່ກຳນົດໃນໃບຢັ້ງຢືນສິດທາງການຄ້າ;
2. ສະເໜີໂຈະຊົ່ວຄາວ, ຕໍ່ອາຍຸ, ດັດແກ້ເນື້ອໃນ, ຍົກເລີກ ຫຼື ລຶບລ້າງໃບຢັ້ງຢືນສິດທາງການຄ້າ;
3. ຊື້-ຂາຍນຳຜູ້ຄ້າພາຍໃນເທົ່ານັ້ນ ສຳລັບສິນຄ້ານຳເຂົ້າ ແລະ ສົ່ງອອກ.

### ມາດຕາ 15 ພັນທະຂອງຜູ້ຄ້າຕ່າງປະເທດທີ່ໄດ້ຮັບການຢັ້ງຢືນສິດທາງການຄ້າ

ຜູ້ຄ້າຕ່າງປະເທດທີ່ໄດ້ຮັບການຢັ້ງຢືນສິດທາງການຄ້າ ມີພັນທະດັ່ງນີ້:

1. ແຈ້ງເສຍພາສີ, ອາກອນ ແລະ ພັນທະອື່ນໆ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
2. ເກັບຮັກສາເອກະສານທຸກໆຄັ້ງທີ່ມີການນຳເຂົ້າ ແລະ ສົ່ງອອກສິນຄ້າຕົວຈິງ ພາຍໃນກຳນົດເວລາສາມປີ ນັບແຕ່ວັນລົງວັນທີໃນໃບແຈ້ງພາສີເປັນລາຍລະອຽດ ຫຼື ນັບແຕ່ວັນໄດ້ເອົາສິນຄ້າອອກຈາກສາງ ຫຼື ດ່ານພາສີເປັນຕົ້ນໄປ;
3. ລາຍງານການນຳເຂົ້າ ແລະ ສົ່ງອອກສິນຄ້າ ປະຈຳເດືອນ, ງວດ, ແລະ ປີ ໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;
4. ແຈ້ງໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ແລະ ຂະແໜງການທີ່ກ່ຽວຂ້ອງຊາບ ໃນກໍລະນີທີ່ມີການໂຈະຊົ່ວຄາວ, ຕໍ່ອາຍຸ, ດັດແກ້ເນື້ອໃນ, ຍົກເລີກ ຫຼື ລຶບລ້າງໃບຢັ້ງຢືນສິດທາງການຄ້າ;
5. ປະຕິບັດພັນທະອື່ນໆ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

## ໝວດທີ V
## ຂໍ້ຫ້າມ

### ມາດຕາ 16 ຂໍ້ຫ້າມສຳລັບຜູ້ຄ້າຕ່າງປະເທດທີ່ໄດ້ຮັບການຢັ້ງຢືນສິດທາງການຄ້າ

ຫ້າມຜູ້ຄ້າຕ່າງປະເທດທີ່ໄດ້ຮັບການຢັ້ງຢືນສິດທາງການຄ້າ ມີພຶດຕິກຳດັ່ງນີ້:

1. ນຳເຂົ້າ ຫຼື ສົ່ງອອກສິນຄ້າ ໂດຍບໍ່ມີໃບຢັ້ງຢືນສິດທາງດ້ານການຄ້າ;
2. ນຳເຂົ້າ ຫຼື ສົ່ງອອກສິນຄ້າ ບໍ່ຖືກຕ້ອງຕາມຂັ້ນຕອນທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

3. ເອົາໃບຢັ້ງຢືນສິດທາງດ້ານການຄ້າຂອງຕົນ ໃຫ້ບຸກຄົນອື່ນນຳໃຊ້;

4. ເກັບຊື້ ຫຼື ຂາຍສິນຄ້ານຳປະຊາຊົນລາວໂດຍກົງ ຫລື ຜູ້ຄ້າພາຍໃນທີ່ບໍ່ໄດ້ຮັບສິດຈຳໜ່າຍສິນຄ້າ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

**ມາດຕາ 17 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ**

ຫ້າມພະນັກງານລັດຖະກອນ ມີພຶດຕິກຳ ດັ່ງນີ້:

1. ກົດໜ່ວງຖ່ວງດຶງ ຫຼື ແກ່ຍາວເວລາໃນການພິຈາລະນາອອກໃບຢັ້ງຢືນສິດທາງການຄ້າ;
2. ຂັດຂວາງການນຳເຂົ້າ ແລະ ການສົ່ງອອກສິນຄ້າຂອງຜູ້ຄ້າຕ່າງປະເທດທີ່ໄດ້ຮັບການຢັ້ງຢືນສິດທາງການຄ້າ;
3. ສວຍໃຊ້ອຳນາດ, ຕຳແໜ່ງ ຫຼື ໜ້າທີ່ ເພື່ອຮຽກຮ້ອງເອົາຜົນປະໂຫຍດ;
4. ປະລະໜ້າທີ່, ຂາດຄວາມຮັບຜິດຊອບ ແລະ ບິດເບືອນຄວາມຈິງ;
5. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມແປງ;
6. ປິດບັງ, ປົກປ້ອງ ແລະ ໃຫ້ຄວາມຮ່ວມມືແກ່ຜູ້ກະທຳຄວາມຜິດ;
7. ເປີດເຜີຍຄວາມລັບທຸລະກິດໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ຄ້າຕ່າງປະເທດທີ່ກ່ຽວຂ້ອງ;
8. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ VI
## ອົງການຄຸ້ມຄອງວຽກງານສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ

**ມາດຕາ 18 ອົງການຄຸ້ມຄອງວຽກງານສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ**

ກະຊວງອຸດສາຫະກຳ ແລະ ການຄ້າ ຄຸ້ມຄອງວຽກງານສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກົມການນຳເຂົ້າແລະສົ່ງອອກ ປະສານສົມທົບກັບພາກສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງກົມການນຳເຂົ້າ ແລະ ສົ່ງອອກ**

ກົມການນຳເຂົ້າ ແລະ ສົ່ງອອກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ, ສ້າງນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການນຳເຂົ້າ ແລະ ສົ່ງອອກສິນຄ້າ ຂອງຜູ້ຄ້າຕ່າງປະເທດ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ໂຄສະນາ, ເຜີຍແຜ່, ແນະນຳການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງໃຫ້ສັງຄົມຢ່າງທົ່ວເຖິງ;

3. ພິຈາລະນາການອອກ, ຕໍ່ອາຍຸ ແລະ ດັດແກ້ເນື້ອໃນໃບຢັ້ງຢືນສິດທາງການຄ້າ;

4. ສັ່ງໂຈະ, ຍົກເລີກ, ລຶບລ້າງ, ຕໍ່ອາຍຸ ຫຼື ຢຸດເຊົາ ການເຄື່ອນໄຫວນຳເຂົ້າ ແລະ ສົ່ງອອກສິນຄ້າຂອງຜູ້ຄ້າຕ່າງປະເທດ, ອອກຄືນໃໝ່ ແລະ ດັດແກ້ເນື້ອໃນຂອງໃບຢັ້ງຢືນສິດທາງການຄ້າ;

5. ເຜີຍແຜ່ໃຫ້ມວນຊົນຮັບຊາບ ໂດຍຜ່ານສື່ຕ່າງໆ ຂອງ ສປປ ລາວ ຫຼັງຈາກອອກອະນຸຍາດ, ໂຈະຊົ່ວຄາວ ຫຼື ລຶບລ້າງໃບຢັ້ງຢືນສິດທາງການຄ້າ;

6. ຄຸ້ມຄອງ ແລະ ຕິດຕາມ, ກວດກາການເຄື່ອນໄຫວການນຳເຂົ້າ ແລະ ສົ່ງອອກສິນຄ້າຂອງຜູ້ຄ້າຕ່າງປະເທດທີ່ໄດ້ຮັບສິດທາງດ້ານການຄ້າ;

7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວນຳເຂົ້າ ແລະ ສົ່ງອອກສິນຄ້າຂອງຜູ້ຄ້າຕ່າງປະເທດ ເພື່ອລາຍງານໃຫ້ຄະນະນຳກະຊວງຮັບຊາບ ປະຈຳງວດ ແລະ ປະຈຳປີ;

8. ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ແລະ ລະບຽບການ.

## ໝວດທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 20 ນະໂຍບາຍຕໍ່ຜູ້ມີຜົນງານ

ຜູ້ຄ້າຕ່າງປະເທດທີ່ໄດ້ຮັບການຢັ້ງຢືນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຊົມເຊີຍ ຫຼື ນະໂຍບາຍອື່ນຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 21 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການກ່າວຕັກເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ.

## ໝວດທີ VIII
## ບົດບັນຍັດສຸດທ້າຍ

### ມາດຕາ 22 ການຈັດຕັ້ງປະຕິບັດ

ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ມີປະສິດທິຜົນສູງ.

### ມາດຕາ 23 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ພິມລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

**ລັດຖະມົນຕີ**

# ແບບພິມ 1: ໃບສະເໜີຂໍໃບຢັ້ງຢືນສິດທາງການຄ້າຂອງຜູ້ຄ້າຕ່າງປະເທດ

| **TRADING RIGTHS CERTIFICATE APPLICATION FORM** | | | |
|---|---|---|---|
| **1. ໃບສະເໜີຂໍ/Application lodged for** | | | |
| ☐ ອອກໃບຢັ້ງຢືນໃໝ່/new certificate | | | |
| **2. ຂໍ້ມູນສ່ວນຕົວຂອງຜູ້ສະເໜີ** (ໃນພາກສ່ວນນີ້ ສຳລັບລາຍລະອຽດໃນການຕື່ມຂໍ້ມູນຕ້ອງຄືກັນກັບຂໍ້ມູນໃນ ໜັງສືຜ່ານແດນ, ໃບທະບຽນວິສາຫະກິດ ຫຼື ເອກະສານທາງການອື່ນໆ)/Applicant personal details (Details given in this section must match with the passport, business registration certificate or other official documents). | | | |
| ຄຳແທນນາມ | ☐ ທ້າວ/Mr ☐ ນາງ/Mrs ☐ ນາງ/Ms ☐ ດຣ/Dr<br>☐ອື່ນໆ/Other:<br>..............................................................................<br>(ກະລຸນາລະບຸ) / (Please specify) | | |
| ນາມສະກຸນ/Family name | | | |
| ຊື່/Given name | | | |
| ເພດ/Gender | ☐ ຊາຍ/Male ☐ ຍິງ/Female<br>☐ ອື່ນໆ/Other:<br>..............................................................................<br>(ບໍ່ຊັດເຈນ/ສອງເພດ/ບໍ່ລະບຸ)/(*Indeterminate/intersex/unspecified*) | | |
| ສັນຊາດ/Current nationality | | | |
| ໜັງສືຜ່ານແດນເລກທີ/Passport number | | ອອກໃຫ້ວັນທີ/Date of issue | ☐...../....../...........<br>(ວັນທີ/ເດືອນ/ປີ)/<br>(dd/mm/yyyy) |
| ອອກໃຫ້ໂດຍ/Issued by | | ໝົດອາຍຸວັນທີ/Valid until | ☐ ...../....../...........<br>(ວັນທີ/ເດືອນ/ປີ)<br>/(dd/mm/yyyy) |
| (ກະລຸນາລະບຸ ລາຍລະອຽດຂອງທີ່ຢູ່ປະຈຸບັນ (ບ້ານ, ເມືອງ, ແຂວງ, ປະເທດ) ແລະ ຂໍ້ມູນຕິດຕໍ່ຂອງຜູ້ສະເໜີ (ເບີໂທລະສັບ, ແຟັກ ແລະ ອີເມລ…)/Current applicant’s home address and contact details (telephone, fascimile and e-mail) | | | |
| **3. ຂໍ້ມູນວິສາຫະກິດ/Business informations** | | | |
| ໃບທະບຽນວິສາຫະກິດເລກທີ/Business registration certificate number | | | |
| ກິດຈະການດຳເນີນທຸລະກິດ/Business activities | | | |
| ອອກໃຫ້ວັນທີ/Date of issue<br>☐ ...../....../...........<br>(ວັນທີ/ເດືອນ/ປີ) (dd/mm/yyyy) | | ໝົດກຳນົດວັນທີ/Expiration date<br>☐ ...../....../...........<br>(ວັນທີ/ເດືອນ/ປີ) (dd/mm/yyyy)<br>☐ (ບໍ່ມີ) N/A | |

**ສຳລັບເຈົ້າໜ້າທີ່/For official use only**

**ເອກະສານທີ່ຕ້ອງມີ/ Supporting documents:**

☐ ສຳເນົາໜັງສືຜ່ານແດນ/ copy of passport

☐ ສຳເນົາໃບທະບຽນວິສາຫະກິດ/Copy of Business registration certificate

☐ ເອກະສານຢັ້ງຢືນອອກໂດຍພາກສ່ວນທີ່ກ່ຽວຂ້ອງ/ Office certificate

☐ ໃບແຈ້ງໂທດ/Criminal record

☐ ໃບມອບສິດ/Power of attoney

**ເອກະສານເພີ່ມເຕີມ/ Additional documents** ໃນກໍລະນີຕໍ່ອາຍຸໃບຢັ້ງຢືນ/in case of renew:

☐ ໃບຢັ້ງຢືນສິດທາງການຄ້າສະບັບຕົ້ນ/Original Trading rights certificate

☐ ໃບຢັ້ງຢືນການປະຕິບັດພັນທະພາສີ, ອາກອນ ແລະ ຄ່າພັນທະອື່ນໆຈາກກົມພາສີ /Certificate of taxes and other fees payment from Customs Department

**ໃບສະເໜີຂໍໃບຢັ້ງຢືນສິດທາງການຄ້າ/Application decision:**

☐ ຜ່ານ/Granted

☐ ບໍ່ຜ່ານ/Denied

ເຫດຜົນທີ່ບໍ່ຜ່ານ/Reason(s) of denial:
....................................

<table>
<tr><td colspan="2">ກະລຸນາລະບຸ ຊື່ ແລະ ທີ່ຢູ່ບ່ອນອອກອະນຸຍາດ (ທີ່ຢູ່,ເບີໂທລະສັບ, ແຟັກ)/<br>Name and address of issuance authority (Address, telephone, fascimile)</td><td rowspan="4">...................................<br>...................................<br>...................................<br>...................................<br>...................................<br>...................................<br>...................................<br>..............................</td></tr>
<tr><td>ອອກໃຫ້ວັນທີ/Date of issue<br>☐ ...../....../........... (ວັນທີ/ເດືອນ/ປີ)/(dd/mm/yyyy)</td><td>ວັນທີໝົດອາຍຸ/Expiration date<br>☐ ...../....../........... (ວັນທີ/ເດືອນ/ປີ) (dd/mm/yyyy)</td></tr>
<tr><td colspan="2">ກະລຸນາລະບຸ ຊື່, ນາມສະກຸນ, ທີ່ຢູ່, ເບີໂທລະສັບ, ແຟັກ ແລະ ທີ່ຢູ່ອີເມລຂອງຜູ້ອອກອະນຸຍາດ/Surname, first name, titlement, address, telephone, fascimile and e-mail address of contact person in the issue authority</td></tr>
<tr><td>ໃບຢັ້ງຢືນສິດທາງການຄ້າທີ່ມີຢູ່/Existing trading rights certificate</td><td></td></tr>
<tr><td>ຂ້າພະເຈົ້າຂໍຢັ້ງຢືນວ່າ ທຸກຂໍ້ມູນທີ່ລະບຸໃນໃບສະເໜີ ແລະ ເອກະສານປະກອບມາພ້ອມນີ້ ມີຄວາມຖືກຕ້ອງກັບຄວາມເປັນຈິງທຸກປະການ. ຖ້າຫາກມີການແຈ້ງຂໍ້ມູນທີ່ບໍ່ຖືກຕ້ອງ ແລະ ບໍ່ເປັນຈິງ, ຂ້າພະເຈົ້າຍິນຍອມຮັບຜິດຊອບຕາມກົດໝາຍ ແລະ ລະບຽບການຂອງ ສ ປປ ລາວ ທີ່ໄດ້ວາງອອກ/I declared that to the best of my knowledge all particulars supplied by me are correct and complete. I am aware that any false statements will lead to my application being rejected or may render me liable to prosecution under the law and regulations of Lao PDR.</td><td colspan="2">ທີ່.........................., ວັນທີ/Place and date....................................<br>ລາຍເຊັນຜູ້ສະເໜີ/Signature of applicant</td></tr>
</table>

**ແບບພິມ 2: ໃບສະເໜີຂໍດັດແກ້ ຫຼື ຂໍຕໍ່ອາຍຸໃບຢັ້ງຢືນສິດທາງການຄ້າ**

## REVISED/RENEWED TRADING RIGTHS CERTIFICATE APPLICATION FORM

| | | | |
|---|---|---|---|
| **1. ໃບສະເໜີຂໍ/Application lodged for** | | | |
| ☐ ດັດແກ້ໃບຢັ້ງຢືນ/modification of certificate | | ☐ ຂໍຕໍ່ອາຍຸໃບຢັ້ງຢືນ/re-issue certificate | |
| **2. ຂໍ້ມູນສ່ວນຕົວຂອງຜູ້ສະເໜີ** (ໃນພາກສ່ວນນີ້ ສຳລັບລາຍລະອຽດໃນການຕື່ມຂໍ້ມູນຕ້ອງຄືກັນກັບຂໍ້ມູນໃນ ຫນັງສືຜ່ານແດນ, ໃບທະບຽນວິສາຫະກິດ ຫຼື ເອກະສານທາງການອື່ນໆ)/Applicant personal details (Details given in this section must match with the passport, business registration certificate or other official documents). | | | |
| ຊື່/Name | | | |
| ກະລຸນາລະບຸ ລາຍລະອຽດຂອງທີ່ຢູ່ ແລະ ຂໍ້ມູນຕິດຕໍ່ (ເບີໂທລະສັບ, ແຟັກ ແລະ ອີເມລ) /Address and contact details (telephone, fascimile and e-mail) | | | |
| ໃບຢັ້ງຢືນສິດທາງການຄ້າທີ່ມີຢູ່/ Existing trading rights certificate | | | |
| ອອກໃຫ້ວັນທີ/Date of issue<br>☐ ...../....../...........<br>(ວັນທີ/ເດືອນ/ປີ) (dd/mm/yyyy) | | ວັນທີໝົດອາຍຸ/Expiration date<br>☐ ...../....../...........<br>(ວັນທີ/ເດືອນ/ປີ)/(dd/mm/yyyy) | |
| **3. ເຫດຜົນໃນການດັດແກ້ ຫຼື ອອກໃບຢັ້ງຢືນໃໝ່ (ກະລຸນາໝາຍໃສ່ຂໍ້ມູນລຸ່ມນີ້)/Reason for modification or re-issuance (Tick where applicable)** | | | |
| ☐ ໃບຢັ້ງຢືນໝົດອາຍຸ/Invalidity of Trading rights certificate | | | |
| ☐ໃບຢັ້ງຢືນສິດທາງການຄ້າເສຍ/Lost/damage of Trading rights certificate | | | |
| ☐ ປ່ຽນໃບວິສາຫະກິດ / ໜັງສືຜ່ານແດນ/Change of business registration certificate/Passport | | | |
| ☐ ປ່ຽນຊື່ເຈົ້າຂອງວິສາຫະກິດ/Change of business owner | ຄຳແທນນາມ | ☐ ທ້າວ/Mr ☐ ນາງ/Mrs ☐ ນາງ/Ms ☐ ດຣ/Dr<br>☐ອື່ນໆ/Other:<br>..................................................<br>(ກະລຸນາລະບຸ)/(Please specify) | |
| | ຊື່/Name | | |
| | ນາມສະກຸນ/ Family name | | |
| | ເພດ/Gender | ☐ ຊາຍ/Male ☐ ຍິງ/Female<br>☐ອື່ນໆ/Other: ......<br>(ບໍ່ຊັດເຈນ/ສອງເພດ /ບໍ່ລະບຸ)/ (*Indeterminate/intersex/unspecified*) | |
| | ໜັງສືຜ່ານແດນເລກທີ/ Passport | | |
| | ສັນຊາດ/Nationality | | |
| | ອອກໃຫ້ໂດຍ / Issue by | | |
| | | | |

**ສຳລັບເຈົ້າໜ້າທີ່/For official use only**

**ເອກະສານທີ່ຕ້ອງມີ/Supporting documents:**

☐ ສຳເນົາໜັງສືຜ່ານແດນ/ copy of passport ☐ Copy of Business registration certificate/ສຳເນົາໃບທະບຽນວິສາຫະກິດ

☐ ເອກະສານຢັ້ງຢືນທີ່ຢູ່ ຫຼື ທີ່ຕັ້ງຂອງວິສາຫະກິດ/ Address certificate

☐ ໃບແຈ້ງໂທດ/ Criminal record ☐ ໃບມອບສິດ/Power of attoney

**ເອກະສານເພີ່ມເຕີມ/ Additional documents**

ໃນກໍລະນີຕໍ່ອາຍຸໃບຢັ້ງຢືນ/in case of renew:☐ ໃບຢັ້ງຢືນສິດທາງການຄ້າສະບັບຕົ້ນ/Original Trading rights certificate

☐ ໃບຢັ້ງຢືນການປະຕິບັດພັນທະພາສີ, ອາກອນ ແລະ ຄ່າພັນທະອື່ນໆຈາກຂະແໜງການກ່ຽວຂ້ອງ/Certificate of import duty, taxes and other fees payment from relevant agencies

**ໃບສະເໜີຂໍໃບຢັ້ງຢືນສິດທາງການຄ້າ/Application decision:**

☐ ຜ່ານ/Granted

☐ ບໍ່ຜ່ານ/Denied

ເຫດຜົນທີ່ບໍ່ຜ່ານ/Reason(s) of denial:

<table>
<tr><td rowspan="2"></td><td>ອອກໃຫ້ວັນທີ /Issued date</td><td></td><td rowspan="5">....................................<br>....................................<br>....................................<br>....................................<br>....................................<br>....................................<br>....................................<br>....................................<br>..............................</td></tr>
<tr><td>ວັນທີໝົດອາຍຸ /Validity date</td><td></td></tr>
<tr><td>☐ ປ່ຽນທີ່ຢູ່ຫ້ອງການ/Change of office address</td><td colspan="2">ກະລຸນາລະບຸ ລາຍລະອຽດທີ່ຢູ່ໃໝ່ ແລະ ຂໍ້ມູນຕິດຕໍ່ (ເບີໂທລະສັບ, ແຟັກ ແລະ ອີເມລ)/New address and contact details (telephone, fascimile and e-mail)</td></tr>
<tr><td>☐ ອື່ນໆ/Others</td><td colspan="2">ກະລຸນາລະບຸ/Specify ……………………………………………</td></tr>
<tr><td colspan="2">ຂ້າພະເຈົ້າຂໍຢັ້ງຢືນວ່າຂໍ້ມູນທີ່ຕື່ມໃສ່ຂ້າງເທິງນັ້ນ ແມ່ນຖືກຕ້ອງ ແລະ ຄົບຖ້ວນ. ຂ້າພະເຈົ້າຮັບຮູ້ວ່າ ຖ້າຫາກຂໍ້ມູນທີ່ຕື່ມໃສ່ຂ້າງເທິງນັ້ນບໍ່ຖືກຕ້ອງເຊິ່ງມີຜົນຕໍ່ການຂໍໃບສະເໜີຂໍໃບຢັ້ງຢືນສິດທາງການຄ້າບໍ່ຜ່ານ, ຂ້າພະເຈົ້າຍອມຮັບໂທດຕໍ່ຂໍ້ມູນບໍ່ຖືກຕ້ອງ ດັ່ງກ່າວຕາມກົດໝາຍ ແລະ ລະບຽບຂອງ ສປປ ລາວ ທີ່ກຳນົດໄວ້ / I declared that to the best of my knowledge all particulars supplied by me are correct and complete. I am aware that any false statements will lead to my application being rejected or may render me liable to prosecution under the law and regulations of Lao PDR.</td><td>ທີ່ ແລະ ວັນທີ/Place and date............................<br>ລາຍເຊັນຜູ້ສະເໜີ/Signature of applicant</td></tr>
</table>

## ໃບຢັ້ງຢືນສິດທາງດ້ານການຄ້າຂອງຜູ້ຄ້າຕ່າງປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**LAO PEOPLE'S DEMOCRATIC REPUBLIC**
**PEACE INDEPENDENCE DEMOCRACY UNITY PROSPERITY**

ກະຊວງອຸດສາຫະກຳ ແລະ ການຄ້າ
Ministry of Industry and Commerce
ກົມການນຳເຂົ້າ ແລະ ສົ່ງອອກ — ເລກທີ /ກຂອ.ສລ
Department of Import and Export — Ref.no / DIMEX.

ນະຄອນຫຼວງວຽງຈັນ, ວັນທີ
Vientiane, Date

### ໃບຢັ້ງຢືນສິດທາງການຄ້າ/Trading Rights Certificate

ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ອອກ ໃບຢັ້ງຢືນສິດທາງການຄ້າ ໃຫ້:

Department of Import and Export, Ministry of Industry and Commerce grants this certificate to:

| | | |
|---|---|---|
| ສັນຊາດ/Nationality | | |
| ໜັງສືຜ່ານແດນ/Passport | | |
| ຊື່ວິສາຫະກິດ/Name: | | |
| ໃບທະບຽນວິສາຫະກິດ/<br>Business registration certificate | | |
| ກິດຈະການດຳເນີນທຸລະກິດ/<br>Bussiness activity | | |
| ທີ່ຕັ້ງສຳນັກງານ/office address | ຖະໜົນ/Street | |
| | ບ້ານ/Village | |
| | ເມືອງ/City | |
| | ປະເທດ/Country | |
| ໂທ/Telephone | | |
| ແຟັກ/Fax | | |
| ອີເມລ/E-mail | | |
| ອາຍຸນຳໃຊ້/validation | ...../......./.......... - ......../......./........... | |

**ຫົວໜ້າກົມ/Director General,**